ກະຊວງທີ່ຢູ່ອາໄສ ແລະ ການ
ພັດທະນາຕົວເມືອງຂອງ
ສະຫະລັດ

# ຂໍ້ທີ 8:

# ຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ



## ຮູ້ຈັກສິດທິຂອງທ່ານ

- ທ່ານມີສິດສືບຕໍ່ຢູ່ເຮືອນເຊົ່າຂອງທ່ານດ້ວຍການຊ່ວຍເຫຼືອຈາກຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ (Enhanced Voucher)
- ທ່ານສາມາດຢູ່ໄດ້ດົນຕາບໃດທີ່ເຮືອນນັ້ນຖືກໃຊ້ເປັນທີ່ຢູ່ອາໄສໃຫ້ເຊົ່າ ແລະ ມີສິດໄດ້ຮັບການຊ່ວຍເຫຼືອພາຍໃຕ້ໂຄງການ Housing Choice Voucher Program
- ສັນຍາເຊົ່າຂອງທ່ານບໍ່ສາມາດຖືກຢຸດເຊົາໄດ້ ຍົກເວັ້ນຍ້ອນການລະເມີດສັນຍາເຊົ່າທີ່ຮ້າຍແຮງຫຼາຍເທື່ອ ຫຼື ເຫດຜົນທີ່ດີອື່ນ

## ຈະເກີດຫຍັງຂຶ້ນກັບທີ່ຢູ່ອາໄສຂອງ

### ການດຳເນີນການປ່ຽນແປງ

ອາຄານຂອງທ່ານກຳລັງມີການປ່ຽນແປງ ໂດຍທົ່ວໄປແລ້ວ ສິ່ງນີ້ເກີດຂຶ້ນເມື່ອມີໜຶ່ງໃນສາມສະພາບການເກີດຂຶ້ນ: ເຈົ້າຂອງຊັບສິນເອກະຊົນເລືອກບໍ່ເຂົ້າຮ່ວມໃນໂຄງການຊ່ວຍເຫຼືອຄ່າເຊົ່າເມື່ອໄລຍະສັນຍາສິ້ນສຸດ; ກະຊວງ HUD ຢຸດເຊົາສັນຍາຊ່ວຍເຫຼືອຄ່າເຊົ່າ; ຫຼື ເຈົ້າຂອງໄດ້ຈ່າຍ ເງິນກູ້ຊື້ເຮືອນທີ່ລັດຖະບານຊ່ວຍເຫຼືອສະເພາະໝົດແລ້ວກ່ອນຮອດວັນທີຄົບກຳນົດຂອງເງິນກູ້ຊື້ເຮືອນ ໃນບາງກໍລະນີ ເຈົ້າຂອງເຮືອນຕ້ອງໄດ້ແຈ້ງບອກທ່ານກ່ຽວກັບສິ່ງນີ້ໜຶ່ງປີກ່ອນສິ້ນສຸດສັນຍາເຊົ່າ ການດຳເນີນການປ່ຽນແປງອາດກໍ່ໃຫ້ເກີດສະພາບການທີ່ການດຳເນີນຊີວິດຂອງຄອບຄົວໃນໂຄງການສືບກັບການເພີ່ມຂຶ້ນຂອງຄ່າເຊົ່າ ເພື່ອປົກປ້ອງທ່ານ ແລະ ຄອບຄົວຂອງທ່ານຈາກການເພີ່ມຂຶ້ນຂອງຄ່າເຊົ່າ ກົດໝາຍໃຫ້ການປົກປ້ອງສະເພາະແກ່ຜູ້ເຊົ່າ ການປົກປ້ອງເຫຼົ່ານີ້ລວມມີຄວາມເປັນໄປໄດ້ສຳລັບການຊ່ວຍເຫຼືອຄ່າເຊົ່າພ້ອມກັບສິດໃນການສືບຕໍ່ຢູ່ໃນເຮືອນເຊົ່າ ຄອບຄົວທີ່ອົງການ Public Housing Authority (PHA) ປະຈຳທ້ອງຖິ່ນກຳນົດວ່າມີສິດໄດ້ຮັບຈະມີໂອກາດໄດ້ຮັບການຊ່ວຍເຫຼືອຄ່າເຊົ່າ ການຊ່ວຍເຫຼືອນີ້ຖືກສະໜອງໃຫ້ເປັນຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ Enhanced Voucher (ຢູ່ຕໍ່) ຫຼື ຄູປ໋ອງທາງເລືອກບ່ອນຢູ່ອາໄສ Housing Choice Voucher (ຍ້າຍ)

# ຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີແມ່ນຫຍັງ?

ໜຶ່ງໃນຫຼາຍວິທີທີ່ຄອບຄົວໄດ້ຮັບໂອກາດໃຫ້ສືບຕໍ່ຢູ່ໃນເຮືອນເຊົ່າແມ່ນດ້ວຍ ຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ (Enhanced Voucher) ອົງການ PHA ທີ່ເປັນຜູ້ບໍລິຫານໃບຄູປ໋ອງຊ່ວຍເຫຼືອຕ່າງໆຈະຕັດສິນກຳນົດການມີສິດໄດ້ຮັບໃບຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ (enhanced voucher) ໃບຄູປ໋ອງເຫຼົ່ານີ້ແຕກຕ່າງຈາກໃບຄູປ໋ອງທາງເລືອກບ່ອນຢູ່ອາໄສປົກກະຕິຕາມຂໍ້ 8 ໃນສອງແບບ:

- ອັນທຳອິດ, ຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີເຮັດໃຫ້ທ່ານມີສິດສືບຕໍ່ຢູ່ໃນເຮືອນເຊົ່າຫຼັງຈາກມີການດຳເນີນການປ່ຽນແປງ ຕາບໃດທີ່ເຮືອນນັ້ນຍັງສືບຕໍ່ຖືກໃຊ້ເປັນບ່ອນຢູ່ອາໄສໃຫ້ເຊົ່າ
- ອັນທີສອງ, ຈຳນວນເງິນທີ່ PHA ສາມາດຈ່າຍໃຫ້ຄ່າເຊົ່າຢູ່ເຮືອນເຊົ່ານັ້ນອາດຈະຫຼາຍກວ່າຄ່າເຊົ່າທີ່ PHA ຈະຈ່າຍໃຫ້ສຳລັບເຮືອນເຊົ່າທີ່ຄ້າຍຄືກັນທີ່ມີຄູປ໋ອງທາງເລືອກບ່ອນຢູ່ອາໄສແບບປົກກະຕິ

ຈົ່ງຈື່ວ່າ *ທ່ານສາມາດສືບຕໍ່ຢູ່ເຮືອນເຊົ່າໄດ້* ທ່ານບໍ່ສາມາດຖືກບອກໃຫ້ອອກໄປ ຫຼື ຖືກໄລ່ອອກຈາກເຮືອນເຊົ່າໄດ້ ຍົກເວັ້ນວ່າມີການລະເມີດສັນຍາເຊົ່າທີ່ຮ້າຍແຮງ ຫຼື ຫຼາຍເທື່ອ ການລະເມີດເຫຼົ່ານີ້ແມ່ນສິ່ງຕ່າງໆ ເຊັ່ນວ່າ ບໍ່ຈ່າຍຄ່າເຊົ່າ, ບໍ່ເບິ່ງແຍງຮັກສາເຮືອນເຊົ່າ ແລະ ການລະເມີດຂໍ້ສັນຍາອື່ນໆ ທີ່ລະບຸໄວ້ໃນສັນຍາເຊົ່າທີ່ທ່ານເຊັນ ທ່ານຍັງມີສິດໄປຫາສານເພື່ອວ່າໄດ້ນດຳເນີນຄະດີເລື່ອງການຂັບໄລ່ອອກຈາກເຮືອນເຊົ່າ ອີງໃສ່ຂໍ້ກຳນົດຂອງ HUD ຖ້າທ່ານກຳລັງອາໄສຢູ່ໃນເຮືອນເຊົ່າທີ່ PHA ຕັດສິນວ່າໃຫຍ່ເກີນໄປ ຫຼື ນ້ອຍເກີນໄປສຳລັບຄອບຄົວຂອງທ່ານ ທ່ານຈະຖືກຮ້ອງຂໍໃຫ້ຍ້າຍໄປເຮືອນເຊົ່າທີ່ເໝາະສົມຫຼາຍກວ່າກັບຂະໜາດຄອບຄົວຂອງທ່ານ

กະຊວງທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງຂອງສະຫະລັດ

# ຂໍ້ທີ 8:

# ຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ

## ຕົວຢ່າງຂອງການລະເມີດສັນຍາເຊົ່າທີ່ຮ້າຍແຮງ

- ການບໍ່ຈ່າຍຄ່າເຊົ່າ
- ສາເຫດທີ່ດີພາຍໃຕ້ໂຄງການຄູປ໋ອງຊ່ວຍເຫຼືອ
- ບໍ່ເບິ່ງແຍງຮັກສາເຮືອນເຊົ່າ
- ເກີດອາຊະຍາກໍາຮ້າຍແຮງຢູ່ເຮືອນເຊົ່າ
- ອັນໃດກໍຕາມທີ່ລະບຸໄວ້ພາຍໃນສັນຍາເຊົ່າທີ່ເປັນເຫດຜົນທີ່ອະນຸຍາດໃຫ້ຢຸດເຊົາການເຊົ່າ



# ຂ້ອຍຕ້ອງການຊອກຫາບ່ອນຢູ່ໃໝ່

### ສິດທິໃນການຍ້າຍບ່ອນຢູ່ດ້ວຍໃບຄູປ໋ອງທາງເລືອກທີ່ຢູ່ອາໄສ

ຖ້າທ່ານບໍ່ຕ້ອງການສືບຕໍ່ຢູ່ເຮືອນເຊົ່ານັ້ນ ທ່ານສາມາດຍ້າຍໄດ້ ທ່ານຈະໄດ້ຮັບຄູປ໋ອງທາງເລືອກທີ່ຢູ່ອາໄສເພື່ອຍ້າຍ ແທນໃບຄູປ໋ອງຊ່ວຍເຫຼືອແບບເພີ່ມທະວີ ຖ້າທ່ານຕັດສິນໃຈຮັບເອົາໃບຄູປ໋ອງທາງເລືອກທີ່ຢູ່ອາໄສ ທ່ານຈໍາເປັນຕ້ອງຈ່າຍບໍ່ເກີນ 40% ຂອງລາຍຮັບປະຈໍາເດືອນທີ່ປັບແລ້ວຂອງທ່ານ ຄູປ໋ອງອະນຸຍາດໃຫ້ທ່ານອາໄສຢູ່ບ່ອນໃດກໍໄດ້ທີ່ທ່ານຕ້ອງການຢູ່ໃນປະເທດນັ້ນ ຕາບໃດທີ່ທ່ານຕອບສະໜອງໄດ້ເກນເງື່ອນໄຂສະເພາະທີ່ກໍານົດໄວ້ໂດຍອົງການຄຸ້ມຄອງທີ່ຢູ່ອາໄສສາທາລະນະ  ທ່ານອາດຈະຮ້ອງຂໍເອົາຄູປ໋ອງເພື່ອຍ້າຍບ່ອນຢູ່ກ່ອນສິ້ນສຸດສັນຍາເຊົ່າໄດ້

### ຂໍ້ມູນ ແລະ ການຊ່ວຍເຫຼືອເພີ່ມເຕີມ

ຕິດຕໍ່ຫາຜູ້ຕາງໜ້າອົງການທີ່ຢູ່ອາໄສສາທາລະນະປະຈໍາທ້ອງຖິ່ນຂອງທ່ານສໍາລັບຂໍ້ມູນສະເພາະກ່ຽວກັບເຮືອນຢູ່ ແລະ ການປົກປ້ອງຜູ້ເຊົ່າຂອງທ່ານ

ນອກນັ້ນທ່ານຍັງສາມາດຕິດຕໍ່ຫາຫ້ອງການທີ່ຢູ່ອາໄສຍຸຕິທໍາ ແລະ ໂອກາດເທົ່າທຽມກັນ (Office of Fair Housing and Equal Opportunity) ຂອງ HUD ທີ່ເບີ **1-800-669-9777**, ຖ້າທ່ານເຊື່ອວ່າທ່ານໄດ້ຖືກເລືອກປະຕິບັດ

